ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ຄະນະກຳມະການຄຸ້ມຄອງຫຼັກຊັບ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ເລກທີ 28 /ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 23 ກໍລະກົດ 2025

# ໜັງສືແຈ້ງການ

ເຖິງ: ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ທີ່ນັບຖື.

ເລື່ອງ: ການນຳໃຊ້ແບບພິມກ່ຽວກັບການລາຍງານການນຳໃຊ້ເງິນທີ່ລະດົມໄດ້ ຈາກການອອກຈຳໜ່າຍຮຸ້ນ ແລະ ຮຸ້ນກູ້.

- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ສະບັບເລກທີ 05/ຄຄຊ, ລົງວັນທີ 29 ເມສາ 2022;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການອອກຈຳໜ່າຍຮຸ້ນ (ສະບັບປັບປຸງ), ສະບັບເລກທີ 13/ຄຄຊ, ລົງວັນທີ 11 ທັນວາ 2024;
- ອີງຕາມ ຂໍ້ຕົກລົງວ່າດ້ວຍ ການອອກຈຳໜ່າຍຮຸ້ນກູ້ (ສະບັບປັບປຸງ), ສະບັບເລກທີ 20/ຄຄຊ, ລົງວັນທີ 23 ມິຖຸນາ 2021.

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ຂໍຖືເປັນກຽດແຈ້ງມາຍັງບັນດາ ບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບລາວ ເພື່ອນຳໃຊ້ແບບພິມລາຍງານກ່ຽວກັບການນຳໃຊ້ທຶນທີ່ລະດົມໄດ້ ຕາມທີ່ກຳນົດໄວ້ໃນ ຂໍ້ຕົກລົງວ່າດ້ວຍການອອກຈຳໜ່າຍຮຸ້ນ (ສະບັບປັບປຸງ) ສະບັບເລກທີ 13/ຄຄຊ, ລົງວັນທີ 11 ທັນວາ 2024, ມາດຕາ 28 ການລາຍງານກ່ຽວກັບການນຳໃຊ້ທຶນທີ່ລະດົມໄດ້ ດ້ວຍການອອກຈຳໜ່າຍຮຸ້ນ (IPO/PO/RO) ແລະ ຮຸ້ນກູ້ (Corporate Bond) ຕາມທີ່ກຳນົດໄວ້ໃນ ຂໍ້ຕົກລົງວ່າດ້ວຍການອອກຈຳໜ່າຍຮຸ້ນກູ້ (ສະບັບປັບປຸງ) ສະບັບເລກທີ 20/ຄຄຊ, ລົງວັນທີ 23 ມິຖຸນາ 2021, ມາດຕາ 28 ຊຶ່ງຮ່າງແບບພິມລາຍງານໄດ້ຄັດຕິດມາພ້ອມນີ້.

ໃນກໍລະນີທີ່ມີການການປັບປຸງເນື້ອໃນຂອງແບບພິມດັ່ງກ່າວ ສຄຄຊ ຈະແຈ້ງໃຫ້ບັນດາທ່ານຊາບຕື່ມໃນແຕ່ລະໄລຍະ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນຂອງແຈ້ງການສະບັບນີ້ໃຫ້ໄດ້ຮັບຜົນດີ.

ເຈົ້າໜ້າທີ່ຫົວໜ້າສຳນັກງານ

ຄະນະກຳມະການຄຸ້ມຄອງຫຼັກຊັບ
ສຳນັກງານ ຄຄຊ

ເພາະລາດ ສີສານ

### ແບບພິມຕິດຕາມການນຳໃຊ້ເງິນທຶນຈາກການອອກຈຳໜ່າຍຮຸ້ນສາມັນ (IPO/PO/RO)

1. ຂໍ້ມູນທົ່ວໄປ
   - ຊື່ບໍລິສັດ:
   - ເລກທະບຽນວິສາຫະກິດ
   - ປະເພດຂອງຮຸ້ນ:
   - ຈຳນວນເງິນທຶນທີ່ລະດົມໄດ້:
   - ວັນທີລະດົມທຶນ:

2. ຕາຕະລາງສະຫຼຸບການນຳໃຊ້ເງິນທຶນທີ່ລະດົມໄດ້

| ລຳດັບ | ຈຸດປະສົງການນຳໃຊ້ເງິນຕາມທີ່ໄດ້ກຳນົດໄວ້ໃນໜັງສືຊວນຊື້ | ງົບປະມານທີ່ວາງໄວ້ | ຈຳນວນເງິນທີ່ໃຊ້ຕົວຈິງ | ຍອດເຫຼືອ | ສະຖານະ (ດຳເນີນການ/ສຳເລັດແລ້ວ/ຍັງບໍ່ທັນໄດ້ດຳເນີນການ) | ໝາຍເຫດ |
|---|---|---|---|---|---|---|
| 1 | | | | | | |
| 2 | | | | | | |
| ... | | | | | | |
| | ລວມ | | | | | |

3. ຂໍ້ມູນເພີ່ມເຕີມ
   - ສ່ວນຕ່າງຈາກງົບປະມານເດີມ:
   - ເຫດຜົນທີ່ເກີດມີຜົນຕ່າງ:
   - ແຜນການນຳໃຊ້ທຶນທີ່ໄດ້ຮັບຮອງຈາກກອງປະຊຸມຜູ້ຖືຮຸ້ນ:
   - ແນວທາງຂອງບໍລິສັດໃນການປັບປຸງແຜນ:

4. ສະຖານະຂອງໂຄງການທີ່ກຳລັງດຳເນີນຢູ່ (ຖ້າມີ)
   (ຊື່ໂຄງການ ມີຄວາມຄືບໜ້າ(%) ມີບັນຫາ ຫຼື ອຸປະສັກແນວໃດ, ແນວທາງໃນການແກ້ໄຂ, ຄາດຄະເນໄລຍະເວລາທີ່ຈະສຳເລັດໂຄງການ) ແລະ ແຜນລະອຽດກ່ຽວກັບການດຳເນີນງານໂຄງການໃນແຕ່ລະໄລຍະ.

ທີ່:________________ວັນທີ: ____________

ຜູ້ອຳນວຍການບໍລິສັດຫຼັກຊັບ　　　　　　　　　　　　ຜູ້ອຳນວຍການ

ໝາຍເຫດ ກໍລະນີ ການອອກຈຳໜ່າຍຮຸ້ນສາມັນຢູ່ຕ່າງປະເທດ ແມ່ນເຊັນແຕ່ຜູ້ອຳນວຍການບໍລິສັດ

### ແບບພິມຕິດຕາມການນຳໃຊ້ເງິນຈາກການອອກຈຳໜ່າຍຮຸ້ນກູ້ (Bonds / Debentures)

1. ຂໍ້ມູນການອອກຮຸ້ນກູ້
   - ຊື່ບໍລິສັດ:
   - ຮຸ້ນກູ້ຄັ້ງທີ:_____ປີ ___
   - ວັນທີອອກຈຳໜ່າຍຮຸ້ນກູ້:
   - ອັດຕາດອກເບ້ຍ:
   - ມູນຄ່າອອກຈຳໜ່າຍຮຸ້ນກູ້:
   - ລາຄາຕໍ່ໜ່ວຍ:
   - ໂຕແທນຜູ້ຖືຮຸ້ນກູ້:

2. ຕາຕະລາງສະຫຼຸບການນຳໃຊ້ເງິນທຶນທີ່ລະດົມໄດ້

| ລຳດັບ | ຈຸດປະສົງການນຳໃຊ້ເງິນຕາມທີ່ໄດ້ກຳນົດໄວ້ໃນໜັງສືຊວນຊື້ | ງົບປະມານທີ່ວາງໄວ້ໃນການນຳໃຊ້ | ຍອດນຳໃຊ້ໂຕຈິງ | ຍອດເຫຼືອ | ສະຖານະ (ດຳເນີນການ/ສຳເລັດແລ້ວ/ຍັງບໍ່ທັນໄດ້ດຳເນີນການ) | ໝາຍເຫດ |
|---|---|---|---|---|---|---|
| 1 | ຊຳລະໜີ້ເດີມ | | | | | |
| 2 | ໃຊ້ເປັນທຶນໝູນວຽນ | | | | | |
| 3 | ລົງທຶນໃນໂຄງການໃໝ່ | | | | | |
| 4 | ແຜນລະອຽດກ່ຽວກັບການດຳເນີນງານໂຄງການໃນແຕ່ລະໄລຍະ. | | | | | |
| 5 | .......................... | | | | | |
| | ລວມ | | | | | |

3. ຕາຕະລາງການຊຳລະຄືນຮຸ້ນກູ້.

| ວັນທີຄົບກຳນົດ | ປະເພດການຊຳລະ (ດອກເບ້ຍ/ເງິນຕົ້ນ) | ຈຳນວນເງິນທີ່ຕ້ອງຊຳລະ | ວັນທີຊຳລະ | ຊຳລະແລ້ວ ຫຼື ຍັງ | ໝາຍເຫດ |
|---|---|---|---|---|---|
| | | | | ☐ ແມ່ນ ☐ ບໍ່ແມ່ນ | |

4. ຂໍ້ສັງເກດດ້ານການປະຕິບັດຕາມພັນທະ.

- ມີການຈັດສັນເງິນສຳຮອງເພື່ອຊຳລະຮຸ້ນກູ້ ຫຼື ບໍ່: ☐ ມີ ☐ ບໍ່ມີ
- ມີການຜິດນັດຊຳລະ ຫຼື ຜິດສັນຍາ ຫຼື ບໍ່: ☐ ມີ ☐ ບໍ່ມີ, ຖ້າມີກະລຸນາລະບຸ:__________
- ໄດ້ຮັບການກວດສອບຈາກຕົວແທນຜູ້ຖືຮຸ້ນກູ້ ຫຼື ບໍ່:

5. ເອກະສານຄັດຕິດ

- ຫຼັກຖານການຊຳລະເງິນ (ໃບຢັ້ງຢືນການໂອນຊຳລະດອກເບ້ຍ ຫຼື ຕົ້ນທຶນ)
- ຂໍ້ກຳນົດ ຫຼື ເງື່ອນໄຂຂອງຮຸ້ນກູ້
- ລາຍງານທາງດ້ານການເງິນທີ່ກ່ຽວຂ້ອງ
- ລາຍງານຕົວແທນຜູ້ຖືຮຸ້ນກູ້ (ຖ້າມີ)
- ແຜນການນຳໃຊ້ທຶນ

ທີ່:________________ວັນທີ:________

<u>ຜູ້ອຳນວຍການບໍລິສັດຫຼັກຊັບ</u> <u>ຜູ້ອຳນວຍການ</u>

<u>ໝາຍເຫດ:</u> ກໍລະນີ ການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດ ແມ່ນເຊັນແຕ່ຜູ້ອຳນວຍການບໍລິສັດ